ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຊຽງຂວາງ
ສຳນັກງານປົກຄອງແຂວງ

ເລກທີ 13 /ຈຂ.ຊຂ
ວັນທີ 23/10/2015

## ຄຳສັ່ງແນະນຳ

## ຂອງທ່ານເຈົ້າແຂວງ - ແຂວງຊຽງຂວາງ

ເຖິງ: ຫົວໜ້າພະແນກການ ກົມກອງອ້ອມຂ້າງແຂວງ, ທ່ານເຈົ້າເມືອງ, ກອງບັນຊາການກຳລັງປ້ອງ ຊາດ, ປ້ອງກັນຄວາມສະຫງົບ, ນາຍບ້ານ, ຕະຫຼອດຮອດ ພໍ່ແມ່ປະຊາຊົນ ບັນດາເຜົ່າ

ເລື່ອງ: ໃຫ້ເອົາໃຈໃສ່ການຕອບໂຕ້ ຕໍ່ການແຜ່ລະບາດ ຂອງພະຍາດໂປລີໂອ.

- ອີງໃສ່: ຄຳສັ່ງແນະນຳ ຂອງລັດຖະມົນຕີ ກະຊວງສາທາລະນະສຸກ ສະບັບເລກທີ 1844/ສທ, ລົງວັນທີ 23 ຕຸລາ 2015 ວ່າດ້ວຍການອອກຄຳສັ່ງ ໃຫ້ເອົາໃຈໃສ່ການຕອບໂຕ້ ຕໍ່ການແຜ່ລະບາດຂອງ ພະຍາດໂປລີໂອ.
- ອີງໃສ່: ຄຳສັ່ງແນະນຳ ຂອງປະທານ ຄະນະກຳມາທິການ ເພື່ອແມ່ ແລະ ເດັກຂັ້ນແຂວງ ສະບັເລກທີ 01/ຄກມດຂດ ລົງວັນທີ 20 ຕຸລາ2015 ວ່າດ້ວຍການຈັດຕັ້ງ ຂະບວນການ ປອດຢາ/ສັກຢາ ໂປລີໂອ.

ຜ່ານມາທາງແຂວງ ໄດ້ມີຄຳສັ່ງແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດ ຂະບວນການຢອດຢາ/ສັກຢາໂປລີໂອ ຜ່ານການຈັດຕັ້ງປະຕິບັດ ເລີ່ມແຕ່ວັນທີ 20 ຕຸລາ 2015 ມາຮອດປັດຈຸບັນເຫັນວ່າ ຄຳສັ່ງແນະນຳດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ດີສົມຄວນ, ຫຼາຍພາກສ່ວນກໍ່ໄດ້ຕັ້ງໜ້າພະຍາຍາມ ຈັດຕັ້ງຜັນຂະຫຍາຍປະຕິບັດ ມີໝາກຜົນຕົວຈິງຈຳນວນໜຶ່ງ ແຕ່ຄຽງຄູ່ກັນນັ້ນ, ກໍ່ຍັງມີຫຼາຍບັນຫາ ທີ່ຕ້ອງໄດ້ສຸມໃສ່ ເປັນຕົ້ນແມ່ນ ຂອດປະສານງານ ກັບພາກສ່ວນ ທີ່ກ່ຽວຂ້ອງ ຍັງບໍ່ທັນໄດ້ດີ ຄວາມເປັນເຈົ້າການ ມີສ່ວນຮ່ວມ ເພື່ອການຕອບໂຕ້ບໍ່ທັນແຂງແຮງ, ຜູ້ປົກຄອງເດັກຍັງບໍ່ທັນເອົາໃຈໃສ່ ໃນການຮ່ວມມື ເພື່ອສຶກສາອົບຮົມ ແນະນຳໃຫ້ລູກຫຼານ ເຂົ້າຮ່ວມການຢອດຢາ ແລະ ສັກຢາໂປລີໂອ ຢ່າງເປັນຂະບວນການ ພາໃຫ້ການຢອດຢາ ແລະ ສັກຢາ ໂປລີໂອ ບໍ່ບັນລຸ ຕາມຄາດໝາຍ ປະກົດການຜູ້ຕິດເຊື້ອ ພະຍາດໂປລີໂອ ໄດ້ປະກົດຂຶ້ນຢູ່ແຂວງ ໃກ້ຄຽງ ໃນນັ້ນແຂວງເຮົາ ເປັນແຂວງໜຶ່ງ ທີ່ມີຄວາມສ່ຽງຕໍ່ການເກີດລະບາດ ຂອງພະຍາດ, ທາງກະຊວງສາທາລະນະສຸກ ກໍ່ໄດ້ແຈ້ງການມາເຖິງແຂວງ ສະນັ້ນ ເພື່ອສະກັດກັ້ນຢ່າງເດັດຂາດ ຕໍ່ການແຜ່ລາມຂອງການລະບາດ ທີ່ຍັງບໍ່ທັນຢຸດຕິ ແລະ ເຮັດໃຫ້ຂະບວນການຢອດຢາ ແລະ ສັກຢາ ໂປລີໂອ ມີຄວາມຮັບຜິດຊອບສູງ.

### ເຈົ້າແຂວງ - ແຂວງຊຽງຂວາງ ມີຄຳສັ່ງແນະນຳດັ່ງນີ້:

1. ໃຫ້ພະແນກສາທາລະນະສຸກແຂວງ ເປັນໃຈກາງ ປະສານສົມທົບ ກັບຄະນະກຳມາທິການ ເພື່ອແມ່ ແລະ ເດັກຂັ້ນແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການ ຕິດຕາມ ສະພາບການ ແລະ ຕອບໂຕ້ພະຍາດໂປລີໂອ ໃຫ້ທັນການ ໂດຍສຸມໃສ່ ປຸກລະດົມ ການເຂົ້າຮ່ວມເຄື່ອນໄຫວ ສະກັດກັ້ນ ຂອງທຸກພາກສ່ວນ ພາຍໃນແຂວງເຮັດເປັນຄຳແນະນຳ ມອບໝາຍ ຄວາມຮັບຜິດຊອບ ໃຫ້ກັນ ລະອຽດຈະແຈ້ງ

2. ໃຫ້ບັນດາຫົວໜ້າພະແນກການ ກົມກອງອ້ອມຂ້າງແຂວງ ເປັນເຈົ້າການປະສານສົມທົບ ໃຫ້ຄວາມຮ່ວມມື ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ວຽກດັ່ງກ່າວບັນລຸຕາມຄາດໝາຍ ຢ່າງມີປະສິດທິຜົນສູງ.

3. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງສຸມໃສ່ແນະນຳຫ້ອງການສຶກສາເມືອງແຕ່ລະໂຮງຮຽນ ໃນທົ່ວແຂວງ ເປັນເຈົ້າການເກັບກຳບັນຊີລາຍຊື່ ນັກຮຽນ ໃນກຸ່ມເປົ້າໝາຍ ຢູ່ແຕ່ລະໂຮງຮຽນໃຫ້ທົ່ວເຖິງ ລະອຽດຄົບຖ້ວນ ເພື່ອຮ່ວມກັບທີມງານແພດ ທີ່ລົງເຄື່ອນໄຫວ ຢອດຢາ ແລະ ສັກຢາ ໂປລີໂອ ໃຫ້ຄົບຖ້ວນ.

4. ມອບໃຫ້ເຈົ້າເມືອງ ຊີ້ນຳປະທານຄະນະກຳມາທິການ ເພື່ອແມ່ ແລະ ເດັກຂັ້ນເມືອງ ຈົ່ງເອົາໃຈໃສ່ຄື:

4.1. ຕິດຕາມສະພາບການແຜ່ລະບາດ ຂອງພະຍາດໂປລີໂອ ໃນກຸ່ມສ່ຽງ ພ້ອມທັງຊີ້ນຳ ການຈັດຕັ້ງປະຕິບັດ ອະນຸ ວສຊ ໂປລີໂອ ຄັ້ງນີ້ ໃຫ້ບັນລຸຄາດໝາຍ 100% .

4.2. ຈັດແບ່ງ ມອບໃຫ້ບັນດາ ຄະນະກຳມາທິການເພື່ອແມ່ ແລະ ເດັກແຂວງ, ເມືອງ ລົງຕິດຕາມ ຊຸກຍູ້ປຸກລະດົມໃຫ້ ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນທຸກຄອບຄົວ ຈົ່ງໄດ້ນຳເອົາ ລູກຫຼານ ທີ່ມີອາຍຸ ຕໍ່າກວ່າ 10 ປີມາຮັບ ວັກຊີນໃຫ້ທົ່ວເຖິງ ( ສະເພາະ ເມືອງ ໝອກ ແມ່ນໃຫ້ ຢອດ ໃຫ້ເດັກ ແຕ່ເກີດ ຮອດ 15 ປີ).

4.3. ໃຫ້ອຳນາດການປົກຄອງບ້ານ,ສະຫະພັນແມ່ຍິງບ້ານ,ແນວໂຮມບ້ານເປັນເຈົ້າການອຳນວຍສະດວກ ທີມງານແພດໜໍໄປເຄື່ອນໄຫວຢູ່ຂັ້ນບ້ານ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ ຮຽກໂຮມເອົາເປົ້າໝາຍ ຜູ້ໄປທຳການຜະລິດ ຢູ່ໄຮ່, ຢູ່ສວນ, ຢູ່ນາ ໃຫ້ກັບຄືນມາບ້ານ ເພື່ອຮັບການຢອດຢາ ແລະ ສັກຢາ ໂປລີໂອ ຕາມມື້ທີ່ນັດໝາຍ.

4.4. ມອບໃຫ້ຂະແໜງສາທາລະນະສຸກຂັ້ນເມືອງ ແລະ ສຸກສາລາ ຈົ່ງເປັນເຈົ້າການໃນ ດ້ານວິຊາການ ຈັດທີມງານແພດໝໍ ໃຫ້ພຽງພໍ ເພື່ອເຄື່ອນໄຫວບໍລິການຢອດຢາ ແລະ ສັກຢາໂປລີໂອ ໃຫ້ເດັກ ກຸ່ມເປົ້າໝາຍໃຫ້ທົ່ວເຖິງ.

4.5. ຖືເອົາການໂຄສະນາ ສຸຂະສຶກສາ ແກ້ໄຂ ບ່ອນຫຍຸ້ງຍາກ ບ່ອນທີ່ພໍ່ແມ່ ປະຊາຊົນ ຍັງບໍ່ທັນເຂົ້າໃຈ ຕິດພັນກັບການປຸກລະດົມໃຫ້ພໍ່ແມ່ປະຊາຊົນ (ຜູ້ປົກຄອງເດັກ) ເປັນເຈົ້າການ ເຂົ້າຮ່ວມວຽກງານ ນີ້ໃຫ້ມີຄວາມເລິກເຊິ່ງ.

5. ໃຫ້ໜ່ວຍງານ ຈັດຕັ້ງປະຕິບັດ ອະນຸວສຊ ໃນແຕ່ລະຂັ້ນ ຕ້ອງມີຄວາມຮັບຜິດຊອບສູງ ໃນການລາຍງານ ຜົນຂອງການຈັດຕັ້ງປະຕິບັດ ໃນແຕ່ລະວັນ ໃຫ້ແກ່ການນຳເມືອງ ແລະ ຂັ້ນແຂວງ, ພ້ອມທັງລາຍງານບັນຫາ ແລະ ຄວາມຫຍຸ້ງຍາກ ທີ່ປະເຊີນ ໃນແຕ່ລະວັນ ໃຫ້ຄະນະກຳມະການ ເພື່ອແມ່ ແລະ ເດັກຂັ້ນເມືອງ ເປັນເຈົ້າການ, ຊີ້ນຳອຳນາດການປົກຄອງບ້ານ,ອົງການຈັດຕັ້ງມະຫາຊົນລົງໄປແກ້ໄຂ,ໃຫ້ຈັດຕັ້ງຄະນະກວດກາປະເມີນຜົນຂອງການຈັດຕັ້ງປະຕິບັດຖ້າຫາກລຸດ 90% ໃຫ້ໜ່ວຍແພດລົງໄປເກັບເລັມຄືນໃໝ່ ຫຼື ໃຫ້ນາຍບ້ານຈັດຕັ້ງ ເອົາເປົ້າໝາຍໄປຮັບບໍລິການ ນຳໜ່ວຍແພດເຄື່ອນທີ່ ຫຼື ສະຖານທີ່ບໍລິການສາທາລະນະສຸກ ທີ່ໃກ້ນັ້ນ.

6. ໃຫ້ພະແນກໂຍທາທິການ, ສະມາຄົມຂົນສົ່ງທາງບົກ, ລົດໂດຍສານໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກໃນການເດີນທາງ ຂອງທີມແພດ ໄປຫາຈຸດສັກຢາ ແລະ ສົ່ງເດັກເປົ້າໝາຍ ໄປຮັບການບໍລິການ ໃນຊ່ວງ ວສຊ ທີ່ກຳລັງດຳເນີນຢູ່.

7.ເມື່ອໄດ້ຮັບຄຳສັ່ງສະບັບນີ້ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ພາຍໃນແຂວງ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ມີປະສິດທິຜົນດີ.

ຮອງເຈົ້າແຂວງ - ແຂວງຊຽງຂວາງ

ບົວສອນ ສີນວນທອງ